# ກອງທຶນຫລຸດຜ່ອນຄວາມທຸກຍາກ
# ໜ້າທີ່ຮັບຜິດຊອບ

| | |
|---|---|
| ຕຳແໜ່ງ: | ວິສະວະກອນ ຂັ້ນເມືອງ |
| ຈຳນວນຕຳແໜ່ງ: | ຫ້ອງການລະ 01 ຄົນ |
| ລາຍງານໂດຍກົງຫາ: | ຫົວໜ້າທີມງານຂັ້ນເມືອງ, ວິສະວະກອນຂັ້ນແຂວງ |
| ພົວພັນວຽກໃກ້ຊິດກັບ: | ທີມງານ ທລຍ ເມືອງ, ວິສະວະກອນຂັ້ນແຂວງ |
| ໜ້າທີ່ຮັບຜິດຊອບທົ່ວໄປ: | ຊ່ວຍເຫລືອ ແລະ ໃຫ້ຄຳແນະນຳທາງດ້ານວຽກງານວິສະວະກຳ -ການກໍ່ສ້າງໂຄງການຍ່ອຍໃຫ້ແກ່ຊຸມຊົນ |
| ບ່ອນປະຈຳການ: | ຫ້ອງການ ທລຍ ເມືອງ ຢູ່ແຕ່ລະເມືອງ ເປົ້າໝາຍ. |
| ປະເພດສັນຍາ: | ເປັນລາຍປີ ໂດຍອີງຕາມຜົນການປະຕິບັດວຽກຕົວຈິງ ໃນແຕ່ລະໄລຍະ. ມີໄລຍະທົດສອບວຽກ 3-6 ເດືອນ ໃນເວລາເຂົ້າເຮັດວຽກໃໝ່ |

**ໜ້າທີ ແລະ ຄວາມຮັບຜິດຊອບຫລັກ:**

- ໃຫ້ການຊ່ວຍເຫລືອດ້ານວິຊາການ ແລະ ວິສະວະກຳໃນການກະກຽມ ແລະຈັດຕັ້ງປະຕິບັດກິດຈະກຳຂອງກອງທຶນ
- ພົວພັນ ແລະ ເຮັດວຽກຢ່າງໃກ້ຊິດກັບວິສະວະກອນຂັ້ນແຂວງ ລວມໄປເຖິງສະມາຊິກ ໃນພະແນກວິສະວະກຳຂັ້ນສູນກາງ ເພື່ອພັດທະນາຮູບແບບ ແລະ ຫລັກການດ້ານວິຊາການ ແລະ ຮ່າງບົດລາຍງານ ເພື່ອນຳສະເໜີຕໍ່ວິສະວະກອນຢູ່ຂັ້ນແຂວງ
- ໂດຍການສະໜັບສະໜູນຈາກ ທລຍ ແຂວງ, ຕ້ອງສະໜອງຂໍ້ມູນດ້ານວິຊາການ ແລະ ຮ່າງບົດລາຍງານເພື່ອນຳສະເໜີຕໍ່ວິສະວະກອນຢູ່ຂັ້ນແຂວງ
- ພົວພັນ ແລະ ປະສານສົມທົບດ້ານເຕັກນິກ/ວິສະວະກຳ ກັບທຸກໆຂະແໜງການຂອງລັດ ແລະ ຂອງ ອົງການຈັດຕັ້ງ ຕ່າງໆທີ່ກ່ຽວຂ້ອງ ໂດຍສະເພາະຢູ່ຂັ້ນເມືອງ
- ລົງຕິດຕາມກວດກາເບິ່ງການຈັດຕັ້ງປະຕິບັດກິດຈະກຳຍ່ອຍໆຕ່າງໆ- ໂຄງການກໍ່ສ້າງ ຂອງກອງທຶນ ພ້ອມທັງໃຫ້ຄຳແນະນຳ, ແກ້ໄຂໜ້າວຽກ ຫລື ບັນຫາຕ່າງໆທີ່ເຫັນວ່າຈຳເປັນ ແກ່ຊຸມຊົນ ແລະ ຜູ້ຮັບເໝົາ
- ເຂົ້າຮ່ວມໃນການສຳພາດ,ເກັບກຳ ແລະ ວິໄຈຂໍ້ມູນຕ່າງໆ ທາງດ້ານວິສະວະກຳຂອງໂຄງການກໍ່ສ້າງທີ່ສະເໜີ
- ຊີ້ນຳ,ຕິດຕາມ ແລະ ກວດກາກິດຈະກຳໂຄງການກໍ່ສ້າງ ຢູ່ຂັ້ນກຸ່ມບ້ານຢ່າງໃກ້ຊິດ
- ແນະນຳ ແລະ ຊ່ວແກ້ໄຂບັນຫາທີ່ກ່ຽວຂ້ອງທາງດ້ານເຕັກນິກ/ວິສະວະກຳ ໃຫ້ແກ່ກຸ່ມບ້ານ
- ຝຶກອົບຮົມກ່ຽວກັບວິທີຄຸ້ມຄອງນຳໃຊ້ ແລະ ບົວລະບັດຮັກສາໂຄງການກໍ່ສ້າງຕ່າງໆ ໃຫ້ແກ່ຊຸມຊົນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ
- ປະຕິບັດໜ້າວຽກອື່ນໆ ຕາມຄວາມຮຽກຮ້ອງຕ້ອງການ ແລະ ການມອບໝາຍຂອງການຈັດຕັ້ງ

**ຄຸນວຸດທິ ແລະ ປະສົບກາບານ:**

- ຮຽນຈົບວິຊາສະເພາະດ້ານວິສະວຳກຳກໍ່ສ້າງ ຫລື ອອກແບບ
- ມີຄວາມຮູ້ ຫລື ປະສົບການໃນການຕິດຕາມ ແລະ ກວດກາໂຄງການກໍ່ສ້າງໂຄງລ່າງພື້ນຖານ ຢູ່ເຂດຊົນນະບົດ ຢ່າງໜ້ອຍ 2ປີ
- ມີປະສົບການ ຫລື ມີທັກສະໃນການພົວພັນ ແລະ ປະສານງານກັບຊຸມຊົນ, ອຳນາດການ ປົກຄອງທຸກລະດັບໄດ້ດີ
- ສາມາດນຳໃຊ້ຄອມພິວເຕີເຂົ້າໃນວຽກງານຕ່າງໆ Ms. Office (word, excel)
- ມີຄວາມຮູ້ ຫລື ປະສົບການໃນການເປັນຄູຝຶກ